ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===----

ກະຊວງການເງິນ

ເລກທີ: 3643/ກງ

ນະຄອນຫຼວງວຽງຈັນ, ວັນທີ: 31 OCT 2016

# ຄຳແນະນຳ

## ກ່ຽວກັບ ກົນໄກການຄຸ້ມຄອງ, ການນຳໃຊ້ ບັດຊຳລະອາກອນມູນຄ່າເພີ່ມ 10% ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ດ້ວຍບັດ Smart VAT ຢູ່ດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ແຈ້ງການແນະນຳຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 3013/ກງ, ລົງວັນທີ 24 ພະຈິກ 2010 ກ່ຽວກັບການມອບເງິນລາຍຮັບງົບປະມານແຫ່ງລັດເຂົ້າບັນຊີເງິນຝາກຂອງລັດຖະບານ ຜ່ານລະບົບທະນາຄານ ໃນຂອບເຂດທົ່ວປະເທດ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0224/ກງ, ລົງວັນທີ 21 ມັງກອນ 2014 ວ່າດ້ວຍການບໍລິຫານຂໍ້ມູນຂ່າວສານການເງິນແຫ່ງລັດ ດ້ວຍລະບົບເອເລັກໂຕຣນິກ.

## ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ ດັ່ງນີ້ :

### I. ຈຸດປະສົງ

ຄຳແນະນຳສະບັບນີ້ ແມ່ນເພື່ອກຳນົດຫຼັກການ, ວິທີການ ແລະ ຂັ້ນຕອນໃນການຄຸ້ມຄອງການມອບເງິນຄ່າອາກອນມູນຄ່າເພີ່ມ 10% ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ດ້ວຍບັດ Smart VAT ຜ່ານລະບົບທະນາຄານ ທີ່ດ່ານພາສີຊາຍແດນ, ແນໃສ່ຮັບປະກັນໃຫ້ແກ່ການຄຸ້ມຄອງເກັບລາຍຮັບເຂົ້າງົບປະມານແຫ່ງລັດ ຜ່ານລະບົບບັນຊີຄັງເງິນແຫ່ງຊາດ ແລະ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

### II. ການຊຳລະອາກອນມູນຄ່າເພີ່ມ 10% ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ

ການຊຳລະຄ່າອາກອນມູນຄ່າເພີ່ມ 10% ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ, ພາຍຫລັງຜູ້ໂດຍສານໄດ້ດຳເນີນຂັ້ນຕອນການແຈ້ງແລ້ວ ແມ່ນສາມາດຈ່າຍຄ່າອາກອນມູນຄ່າເພີ່ມ 10% ດ້ວຍການນຳໃຊ້ບັດຕ່າງໆ ດັ່ງນີ້:

1. ຊຳລະດ້ວຍບັດ VISA;
2. ຊຳລະດ້ວຍບັດ JCB;

3. ຊຳລະດ້ວຍບັດ Master Card;
4. ຊຳລະດ້ວຍບັດ BCEL ATM – UnionPay;
5. ຊຳລະດ້ວຍບັດ Smart Tax;
6. ຊຳລະດ້ວຍລະບົບ BCEL One.

ສຳລັບຜູ້ໂດຍສານ ທີ່ບໍ່ມີບັດປະເພດດັ່ງກ່າວ ສາມາດໃຊ້ເງິນສົດ ເພື່ອແລກເອົາບັດ Smart VAT ທີ່ຈຸດບໍລິການຂອງທະນາຄານການຄ້າຕ່າງປະເທດ ເພື່ອຈ່າຍຄ່າອາກອນມູນຄ່າເພີ່ມດັ່ງກ່າວ.

## III. ໃບຮັບເງິນຄ່າອາກອນມູນຄ່າເພີ່ມ 10% ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ

ພາຍຫຼັງຜູ້ໂດຍສານ ໄດ້ດຳເນີນຂັ້ນຕອນໃນການແຈ້ງສຳເລັດແລ້ວ ຕ້ອງໄດ້ຊຳລະຄ່າອາກອນມູນຄ່າເພີ່ມ 10% ເຄື່ອງຕິດຕົວຜູ້ໂດຍສານ ຕາມລະບຽບການ, ລະບົບ Smart VAT ຈະພິມໃບຮັບເງິນ ອອກໂດຍອັດຕະໂນມັດ ເພື່ອຢັ້ງຢືນວ່າເງິນທີ່ໄດ້ຊຳລະໄປແລ້ວນັ້ນ ແມ່ນໄດ້ເຂົ້າໃນບັນຊີງົບປະມານແຫ່ງລັດທີ່ເປີດໄວ້ຢູ່ທະນາຄານ ເປັນທີ່ຮຽບຮ້ອຍ.

ໃບຮັບເງິນຂອງລະບົບ Smart VAT ຈະພິມອອກຈາກລະບົບ 1 ໃບ ແລະ ມີເນື້ອໃນດັ່ງນີ້, ຄື :

- ມີໂລໂກ້ຂອງພາສີ ຢູ່ດ້ານເທິງກ້ຳຊ້າຍ;
- ເລກທີໃບຮັບເງິນ (ລະບົບຈະກຳນົດໂດຍອັດຕະໂນມັດ);
- ຊື່ ແລະ ນາມສະກຸນຜູ້ຊຳລະ;
- ເລກທີ ພາສປອດ/ປຶ້ມຜ່ານແດນ/ໜັງສືຜ່ານແດນ;
- ຈຳນວນເງິນທີ່ໄດ້ຊຳລະ;
- ບາໂຄດ ເພື່ອໃຊ້ເປີດໄມ້ກັ້ນ;
- ເນື້ອຄວາມ : "**ການເສຍພາສີ-ອາກອນ ແມ່ນຮັກຊາດ**"

## IV. ຂັ້ນຕອນການເປີດ ແລະ ຈັດການບັນຊີປະຈຳວັນ

1. ກົມພາສີຂໍເປີດບັນຊີເພື່ອຮອງຮັບຄ່າອາກອນມູນຄ່າເພີ່ມ 10% ຈາກເຄື່ອງຕິດຕົວຜູ້ໂດຍສານ ທີ່ທະນາຄານທຸລະກິດ.
2. ພາຍຫລັງປິດບັນຊີປະຈຳວັນ ເວລາ 16:00 ໂມງ, ລະບົບຕ້ອງໂອນລາຍຮັບອາກອນມູນຄ່າເພີ່ມ 10% ຈາກບັນຊີຮອງຮັບຫາບັນຊີລາຍຮັບງົບປະມານ ທີ່ຄັງເງິນແຫ່ງຊາດໄດ້ເປີດໄວ້.
3. ລັດຖະການພາສີ ອອກໃບສັ່ງມອບລາຍຮັບ ຈາກລະບົບ Smart VAT ຕາມຈຳນວນເງິນທີ່ໂອນເຂົ້າບັນຊີງົບປະມານເພື່ອສົ່ງໃຫ້ຄັງເງິນແຫ່ງຊາດປະຈຳແຂວງ ຫລື ນະຄອນຫລວງ.
4. ຄັງເງິນແຫ່ງຊາດປະຈຳແຂວງ,ນະຄອນຫລວງ ກວດກາສົມທຽບຂໍ້ມູນລາຍຮັບຕາມໃບສັ່ງມອບຂອງພາສີ ກັບໜ່ວຍງານທະນາຄານ ເພື່ອບັນທຶກເປັນລາຍຮັບງົບປະມານຂອງສູນກາງ.

## V. ກົນໄກການປະສານງານ ແລະ ຄວາມຮັບຜິດຊອບ

### 1. ຄວາມຮັບຜິດຊອບ ຂອງກົມພາສີ :

- ອອກຄຳແນະນຳ ກ່ຽວກັບ ຂັ້ນຕອນ ແລະ ວິທີການນຳໃຊ້ບັດ ຊຳລະຄ່າອາກອນມູນຄ່າເພີ່ມ ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອປະຕິບັດພັນທະມອບເຂົ້າງົບປະມານແຫ່ງລັດຢ່າງຖືກຕ້ອງ;
- ຄຸ້ມຄອງ, ຕິດຕາມ ແລະ ແນະນຳຜູ້ໂດຍສານ ໃຫ້ດຳເນີນຂັ້ນຕອນການແຈ້ງ ແລະ ຊຳລະຄ່າອາກອນມູນຄ່າເພີ່ມ ໃຫ້ຖືກຕ້ອງຕາມລະບຽບການ;

- ສະເໜີຫາຄັງເງິນແຫ່ງຊາດ ເພື່ອຂໍເປີດບັນຊີຢູ່ທະນາຄານທຸລະກິດ ເພື່ອຮັບຮອງສະເພາະລາຍຮັບອາກອນມູນຄ່າເພີ່ມ 10% ຈາກເຄື່ອງຕິດຕົວຜູ້ໂດຍສານ ໂດຍແມ່ນກົມພາສີ ເປັນຜູ້ຄຸ້ມຄອງ,
- ທຸກໆ ທ້າຍມື້ ໃນເວລາ 16:00 ໂມງ ຕ້ອງປິດບັນຊີປະຈຳວັນ ໂດຍໃຫ້ໂອນຍອດເງິນໃນບັນຊີດັ່ງກ່າວເຂົ້າບັນຊີພາສີທີ່ຄັງເງິນແຫ່ງຊາດເປີດໄວ້ຢູ່ທະນາຄານທຸລະກິດ ພ້ອມທັງອອກໃບສັ່ງມອບຕາມຈຳນວນເງິນທີ່ໂອນເຂົ້າບັນຊີ. ສ່ວນລາຍຮັບທີ່ເກີດຂຶ້ນຕາມພາຍຫຼັງ ແມ່ນໃຫ້ຖືເປັນລາຍຮັບຂອງມື້ຕໍ່ໄປ. ຍົກເວັ້ນວັນເສົາ, ວັນອາທິດ ແລະ ວັນພັກລັດຖະການ ແມ່ນໃຫ້ໂອນຍອດລວມລາຍຮັບທີ່ເກີດຂຶ້ນໃນແຕ່ລະມື້ ໄປເປັນລາຍຮັບຂອງມື້ລັດຖະການຖັດໄປ;
- ບັນທຶກ ແລະ ສັງລວມຂໍ້ມູນການຈັດເກັບອາກອນມູນຄ່າເພີ່ມ 10% ເປັນແຕ່ລະວັນ, ອາທິດ, ເດືອນ ແລະ ປີ ເພື່ອເປັນຂໍ້ມູນໃນການກວດກາສົມທຽບ ໃນແຕ່ລະໄລຍະ;

2. **ຄວາມຮັບຜິດຊອບ ຂອງຄັງເງິນແຫ່ງຊາດ :**
   - ສະເໜີຫາທະນາຄານ ເພື່ອອະນຸຍາດໃຫ້ກົມພາສີ ເປີດບັນຊີຮອງຮັບສະເພາະລາຍຮັບພາສີ 10% ຈາກເຄື່ອງຕິດຕົວຜູ້ໂດຍສານ;
   - ຄັງເງິນແຫ່ງຊາດ ປະຈຳແຂວງ, ນະຄອນຫຼວງ ບ່ອນທີ່ດ່ານພາສີສາກົນໃຊ້ບໍລິການ ຮັບສະໂນດນຳສົ່ງຈາກດ່ານພາສີສາກົນ, ກວດກາທຽບຕົວເລກ ລະຫວ່າງໃບສັ່ງມອບ ແລະ ຈຳນວນເງິນເຂົ້າບັນຊີຂອງຄັງເງິນແຫ່ງຊາດ ໃຫ້ຖືກຕ້ອງກ່ອນຈະຢືນຢັນ ການບັນທຶກບັນຊີເປັນລາຍຮັບງົບປະມານສູນກາງ ແບບອັດຕະໂນມັດ ດ້ວຍລະບົບ GFIS;
   - ກ່ອນປິດບັນຊີປະຈຳວັນ ໜ່ວຍງານລາຍຮັບຄັງເງິນແຫ່ງຊາດ ປະຈຳແຂວງ, ນະຄອນຫຼວງ ຕ້ອງສະຫຼຸບ, ສັງລວມຕົວເລກລາຍຮັບ ທີ່ລົງບັນຊີແບບອັດຕະໂນມັດ ເພື່ອກວດທຽບກັບໃບສັ່ງມອບຂອງກົມພາສີ ແລະ ສົມທຽບກັບໜ່ວຍງານທະນາຄານ.

3. **ຄວາມຮັບຜິດຊອບ ຂອງສູນເຕັກໂນໂລຊີ ຂໍ້ມູນຂ່າວສານການເງິນ :**
   - ຕິດຕັ້ງ, ສ້າງ, ພັດທະນາ ແລະ ປັບປຸງລະບົບການເຊື່ອມຕໍ່ ລະຫວ່າງ ລະບົບຂໍ້ມູນຂ່າວສານການເງິນຂອງລັດ GFIS ແລະ ລະບົບ Smart VAT ຂອງກົມພາສີ ໃຫ້ພ້ອມໃນການໃຊ້ງານໄດ້ຕະຫຼອດເວລາ ແລະ ແທດເໝາະກັບ ການຈັດຕັ້ງປະຕິບັດວຽກງານຕົວຈິງ;
   - ຈັດຝຶກອົບຮົມ ແລະ ແນະນຳຂັ້ນຕອນ, ວິທີການນຳໃຊ້ ລະບົບການເຊື່ອມຕໍ່ ລະຫວ່າງ ລະບົບຂໍ້ມູນຂ່າວສານ ການເງິນຂອງລັດ GFIS ແລະ ລະບົບ Smart VAT ຂອງກົມພາສີ;
   - ສ້າງປຶ້ມຄູ່ມື ແລະ ມອບຄວາມຮັບຜິດຊອບ ໃນໜ້າວຽກທາງເຕັກນິກຮ່ວມກັນ ຢ່າງເປັນລາຍລັກອັກສອນ ລະຫວ່າງ ກົມພາສີ, ຄັງເງິນແຫ່ງຊາດ ແລະ ສູນເຕັກໂນໂລຊີ ຂໍ້ມູນຂ່າວສານການເງິນ.

4. **ຄວາມຮັບຜິດຊອບ ຂອງທະນາຄານທຸລະກິດ**
   - ອຳນວຍຄວາມສະດວກ ເປີດປ່ອງບໍລິການສະເພາະ ເພື່ອຮັບເງິນສົດ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອອອກບັດ Smart VAT ແທນການຖືເງິນສົດ;
   - ສະໜອງອຸປະກອນ ເພື່ອໂອນເງິນເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດສູນກາງ ທີ່ໄດ້ເປີດ ແລະ ເຄື່ອນໄຫວຢູ່ບັນດາສາຂາ ຫຼື ໜ່ວຍບໍລິການ ຂອງທະນາຄານທຸລະກິດຂອງລັດ;
   - ຜະລິດ, ຄຸ້ມຄອງ ແລະ ຈຳໜ່າຍ ບັດ Smart VAT ແລະ ຈຳນວນ ເງິນໃນບັດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃຫ້ມີຄວາມປອດໄພ;

- ຄຸ້ມຄອງ, ຮັກສາຂໍ້ມູນການຈັດເກັບອາກອນມູນຄ່າເພີ່ມ 10% ໃຫ້ບັນທຶກຢູ່ໃນຖານຂໍ້ມູນຂອງກົມພາສີ (ກະຊວງການເງິນ), ພ້ອມນັ້ນກໍຕ້ອງສະໜອງຂໍ້ມູນທາງດ້ານເຕັກນິກຂອງການເຊື່ອມຕໍ່ ລະຫວ່າງລະບົບ Smart VAT ແລະ ລະບົບອື່ນໆ ໃນຕໍ່ໜ້າ;
- ແຕ່ງຕັ້ງພະນັກງານ ເປັນໜ່ວຍງານປະສານງານ ກັບເຈົ້າໜ້າທີ່ພາສີ, ຄັງເງິນແຫ່ງຊາດ ແລະ ສູນເຕັກໂນໂລຊີຂໍ້ມູນຂ່າວສານການເງິນ.

## VI. ມາດຕະການສຸກເສີນ

ໃນກໍລະນີລະບົບຫາກເກີດເຫດຂັດຂ້ອງ ຫຼື ບໍ່ສາມາດດຳເນີນການໄດ້ ຕ້ອງຢຸດບໍລິການຊົ່ວຄາວ, ການດຳເນີນຂັ້ນຕອນການແຈ້ງເສຍອາກອນມູນຄ່າເພີ່ມ 10% ເຄື່ອງຕິດຕົວຜູ້ໂດຍສານ ແມ່ນຫັນມານຳໃຊ້ການແຈ້ງຕາມແບບຟອມປົກກະຕິ, ໂດຍໃຫ້ຜູ້ໂດຍສານຍື່ນຊໍາລະຄ່າອາກອນມູນຄ່າເພີ່ມ 10% ດັ່ງກ່າວ ດ້ວຍເງິນສົດນຳໜ່ວຍງານບໍລິການຂອງທະນາຄານທຸລະກິດປະຈຳດ່ານເຂົ້າບັນຊີຮັບຮອງສະເພາະລາຍຮັບພາສີ 10%, ພາຍຫລັງໄດ້ຮັບເງິນຄົບຖ້ວນແລ້ວ ໃຫ້ໜ່ວຍງານບໍລິການທະນາຄານ ເຊັນ ແລະ ຢັ້ງຢືນລົງໃນໃບແຈ້ງອາກອນມູນຄ່າເພີ່ມດັ່ງກ່າວ ເພື່ອເປັນບ່ອນອີງໃຫ້ເຈົ້າໜ້າທີ່ພາສີ ໃນການກວດປ່ອຍເຄື່ອງຂອງອອກຈາກດ່ານ. ພາຍຫຼັງລະບົບນຳໃຊ້ໄດ້ເປັນປົກກະຕິ ໜ່ວຍງານບໍລິການຂອງທະນາຄານ ຕ້ອງຕີຂໍ້ມູນການຊໍາລະລົງໃນລະບົບຄືນໃໝ່ ໃຫ້ຖືກຕ້ອງຄົບຖ້ວນ.

## VII. ການຈັດຕັ້ງປະຕິບັດ

1. ມອບໃຫ້ກົມພາສີ, ຄັງເງິນແຫ່ງຊາດ ແລະ ສູນເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ກະຊວງການເງິນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງເຜີຍແຜ່, ແນະນຳ ໃຫ້ເຈົ້າໜ້າທີ່ພາສີ ແລະ ຜູ້ປະກອບ ການກ່ຽວຂ້ອງເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດ ຕາມລະດັບຄາດໝາຍ;
2. ໃນການຈັດຕັ້ງປະຕິບັດຕົວຈິງ ແມ່ນໃຫ້ເຮັດທົດລອງ ຢູ່ດ່ານພາສີສາກົນຂົວມິດຕະພາບ I ກ່ອນໃນໄລຍະໃດໜຶ່ງ, ຈາກນັ້ນໃຫ້ກົມພາສີ, ຄັງເງິນແຫ່ງຊາດ ແລະ ສູນເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ກະຊວງການເງິນສົມທົບກັບພາກສ່ວນກ່ຽວຂ້ອງ ຕີລາຄາປະເມີນຜົນ ດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ເພື່ອຖອດຖອນບົດຮຽນ ແລ້ວໃຫ້ຈັດຕັ້ງຜັນຂະຫຍາຍ ໃນຂອບເຂດທົ່ວປະເທດ;
3. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ,**
**ລັດຖະມົນຕີກະຊວງການເງິນ**

**ສົມດີ ດວງດີ**